# ລຳຄອນສວັນ

ວັນເດືອນປີຜ່ານພົ້ນ    ຫຼັກສູດສີ່ປີຄົບ
ຈົບການຮຽນວິຊາຄູ    ຊິຕ່າວຄືນແລ້ວເດີອ້າຍ
ປາຖນາສາຍໃຈນ້ອງ    ເຂົາມີສອງຊ້ອນຍິງໃຫມ່
ສີພັນດອນຈຶ່ງໄດ້ຮ້ອງຮ່ຳໄຫ້    ຄືນບ້ານເຜົ່າຜູ່ໄທ ອ້າຍເອີຍ
ດອນກັບເມືອຮັບໃຊ້    ຣະບອບໃຫມ່ ເປັນສາວຄູ
ໄດ້ສູ້ທົນທານທຸກ    ຮ່ວມກັບບິດາທ່ານ
ພໍ່ປະສານງານໃຫ້    ສີພັນດອນກໍສືບຕໍ່
ລູກແລະພໍ່ໄດ້ເປັນຄູຮ່ວມຊັ້ນ    ສອງຄອນນັ້ນແມ່ນຊື່ເມືອງ ທ່ານເອີຍ
ຊີວິດດອນຄັ້ງນັ້ນ    ບໍ່ຢາກກ່າວມັນສັບສົນ
ສາລະວົນໃນຊີວິດ    ໄດ້ປ່ຽນແປງເຫຼືອຮ້າຍ
ໃຈພັດຍັງຄະນຶງອ້າຍ    ຊາຍຄົນດຽວຊູ້ເກົ່າ
ແຕ່ເຂົາມີຄູ່ຊ້ອນ    ຊອນຂ້າງບໍ່ແມ່ນເຮົາ
ບໍ່ເຄີຍຮູ້ຂ່າວເຈົ້າ    ວ່າອ້າຍຢູ່ແດນໃດ
ບ້ານເກົ່າເນົາເຄີຍນອນ    ອ້າຍຈາກຈອນໄປແລ້ວ
ສຽງແຊວໆເຂົາມາເວົ້າ    ວ່າອວນຊາຍອ້າຍນັ້ນຢູ່
ສູນອຸບົລເປັນທີ່ຕັ້ງ    ບ່ອນຊາຍຈັ້ງຖ້າຊິຫນີ
ແສນເຕັມທົນາງໄຫ້    ເຂັນໃຈທົນລຳບາກ
ຍາກຫຼາຍເດການປົກຄອງກໍຫນີບເຫນັ້ນ    ເຕັງເຂົ້າໃສ່ເຮົາ
ດອນໄດ້ຮູ້ຂ່າວເຈົ້າ    ວ່າຢູ່ຖິ່ນດິນໄທ
ຕັດສິນໃຈຊິໄປຫາ    ເພື່ອເພິ່ງບາລະມີອ້າຍ
ແສນຣະບົມນ້ອງນອນໄຫ້    ສຸດອາລັຍຊິໄກພໍ່
ພ້ອມທັງແມ່ແລະນ້ອງ    ບຸຕຕາແກ້ວຜູ່ເກີດມາ
ຕັດສິນໃຈບາກຫນ້າ    ຊິເຂົ້າສູ່ໄທແລນດ໌
ຈາກດິນແດນທີ່ເຄີຍຮັກ    ຫ່າງພົງພັນເຊື້ອ
ແສນຣະທົມດອນນອນໄຫ້    ນ້ຳຕາໄຫຼນ້ອງຄິດຮ່ຳ

ຄິດນຳພົງພີ່ນ້ອງ ສາຍເຊື້ອເຜົ່າພັນ
ສີພັນດອນໄດ້ດຸ່ງດັ້ນ ກ້າວຈາກທີ່ບໍ່ພໍທີ
ເຫດໄພລີກໍມີເຖີງ ອະຫນາດນອງເຫຼືອຮ້າຍ
ມີນ້ອງຊາຍຄຽງຂ້າງ ມານຳກັນກໍແຕກແຫຼ່ງ
ນາງແສວງເພື່ອນແກ້ວ ໄດ້ຕາຍມ້ວຍຢູ່ຫວ່າງຂອງ
ສຽງປືນດັງກຶກກ້ອງ ເຂົາສຸມໃສ່ໃນກາງຂອງ
ນ້ຳພັດຟອງເຮືອເລີຍຈົມ ຫຼົ່ມລົງນາທີກວ້າງ
ສັຕຣູຂວາງຢູ່ທາງຫນ້າ ກະສູນປືນເຂົາສຸມໃສ່
ສຽງປືນນ້ອຍປືນໃຫຍ່ ຕຶກວິນວຽນຢູ່ຂອບຂ້າງ ນາງກົວມ້ວຍມອດຊີວັງ
ຕອນນີ້ດອນໄດ້ຈັ້ງ ລີ້ຢູ່ຄືນດຽວ
ແສນປ່ຽວພອຍຍາມເດີກ ເຍືອກເຢັນເຫຼືອລ້ຳ
ຄິດຮ່ຳນຳອວນອ້າຍ ຊາຍຫຼັກເຈັດຊູ້ເກົ່າ ຢູ່ໃສເດ
ປາຖນາຂອງເຮົາ ເຂົາຊິຈຳຈື່ໄດ້ ຕອນດອນໄຫ້ເຂົ້າສູນບໍ່ນໍ
ເຫດການເຫມືອນຄຶດໄວ້ ຕອນນາງລ່ວງມາເຖີງ
ສູນອຸບົລທີ່ນາງຝັນ ທີ່ໄຝ່ມາເຖີງພີ້
ແສນເຕັມທີທາງຂ້ອຍ ສາວຄືນພອຍຂາດທີ່ເພີ່ງ
ມາເຖີງຈຸດນ້ອງຈື່ງຮູ້ ຊາຍຊູ້ນ້ອງຫ່າງລາແລ້ວເດ
ຈຸດທີ່ນາງຕັ້ງໄວ້ ປະເທດໃຫມ່ທີສາມ
ຫວັງຈະຕາມອວນຊາຍ ຜູ່ຫນ່າຍນາງຫນີຫນ້າ
ແຕ່ມັນຄາໃຈນ້ອງ ສີພັນດອນຂາດທີ່ເພີ່ງ
ບຸນບໍ່ເຖີງໄດ້ຮ່ວມອ້າຍ ຈື່ງຫມາຍຊ້ອນຜູ່ອື່ນຊອນ
ຕັດສິນໃຈເຂົ້າຊ້ອນ ທັງໆທີ່ບໍ່ມີຮັກ
ຈັກແມ່ນກັມແຕ່ປາງໃດ ຈື່ງຈ່ອງນຳມາເຖີງນີ້
ແສນເຕັມທີແຕ່ທາງນ້ອງ ມີຊາຍຄອງຢາກຫວັງຜ່ານ
ເປັນສະພານກ່າຍໃຫ້ ຢາກໄປໄດ້ດັ່ງຝັນ
ຊີວິດຈາກມື້ນັ້ນ ມັນເຫມືອນຢູ່ໃນນາຣົກ

| | | |
|---|---|---|
| | ຕົກຣະກຳໃນດວງຈິດ | ຄິດຜູ່ດຽວເກືອບເປັນບ້າ |
| | ແຕ່ວ່າວັນເວລານັ້ນ | ຫຼາຍປີໄປກໍພົ້ນຜ່ານ |
| | ການທີ່ເຮົາຮ່ວມຫມັ້ນ | ສົມພັນກ້ຽວກໍເລົ່າມາຍ |
| | ເຖິງຈະເປັນໂຊກຮ້າຍ | ຍັງດີກວ່າຝືນຈິດ |
| | ຄິດອາລັຍແຕ່ນຳບຸດ | ທີ່ເກີດມາບໍ່ພຽງພ້ອມ |
| | ຈຶ່ງໄດ້ພຽນຖນອມລ້ຽງ | ທັງສາມໃຫ້ເຕີບໃຫຍ່ |
| | ຈະເຣີນວັຍເກັ່ງກ້າ | ໃຫ້ທຽມເທົ້າທ່ານຜູ່ດີ |
| | ຈົນມາຮອດມື້ນີ້ | ຈຶ່ງຮູ້ຂ່າວອວນຊາຍ |
| | ໄດ້ຫມັ້ນຫມາຍຄຽງສອງ | ໄດ້ຄູ່ຄອງເມັຽແກ້ວ |
| | ດອນນາງມາເຫັນແລ້ວ | ດອນດີໃຈນ້ຳຕາຫຼັ່ງ |
| ປາຖນາ | ສຸຂສົມຫວັງຊີວິດບິນເວີ່ນຟ້າ | ອ້າຍມີຫນ້າແຕ່ກວ່າຫຼັງ |
| | ຊີວິດອ້າຍເລີ່ມຕັ້ງ | ຄຽງຄູ່ກັບນາງ |
| | ລີຂິດທາງຂອງສວັນ | ສິ່ງພອນມາເຖິງແລ້ວ |
| | ນາງຄືພັລຍາແກ້ວ | ຜູ່ຄຽງຂວັນບໍ່ເຫີນຫ່າງ |
| | ຂໍໃຫ້ທາງຮັກຫມັ້ນ | ຈິ່ງສົມແມ້ງປາຖນາ |
| | ສ່ວນວ່າຄວາມຮັກນ້ອງ | ບໍ່ມີປ່ຽນແປງຜັນ |
| | ທຸກວັນນ້ອງຍັງຄິດ | ອະດີດເຮົາແຕ່ປາງນັ້ນ |
| | ສວງສວັນບໍ່ເຫັນພ້ອມ | ສອງຄົນເຮົາຈຶ່ງໄດ້ຫ່າງ |
| | ແຕ່ວ່າ  ນາງຊິຄອງຮັກຫມັ້ນ | ຊີວັນມ້ວຍບໍ່ອາດລືມ  ອ້າຍເອີຍ |